ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----===000===----

ເລກທີ: 215/ອກພກ

ນະຄອນຫຼວງວຽງຈັນ, ວັນທີ, 29 /05/ 2026

**ແຈ້ງການ ຫຼຸດທຶນຈົດທະບຽນ ແລະ ການໂອນສັນຍາປະກັນໄພທົ່ວໄປ**

**ເຖິງ:** ບັນດາເຈົ້າໜີ້, ຜູ້ຖືສັນຍາປະກັນໄພ, ພາກລັດ ແລະ ເອກະຊົນ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ

**ເລື່ອງ**: ແຈ້ງການ ຫຼຸດທຶນຈົດທະບຽນ ແລະ ການໂອນສັນຍາປະກັນໄພທົ່ວໄປ ຂອງ ບໍລິສັດ ເອັສທີ-ເມືອງໄທ ປະກັນໄພ ຈໍາກັດ.

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 33/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍວ່າດ້ວຍການປະກັນໄພ ສະບັບເລກທີ 78/ສພຊ, ລົງວັນທີ 29 ພະຈິກ 2019;
- ອີງຕາມ ໜັງສືແຈ້ງຕອບ ຂອງ ກົມຄຸ້ມຄອງວິສາຫະກິດການເງິນ ສະບັບເລກທີ 0455-01/ຄວກ, ລົງວັນທີ 04 ພຶດສະພາ 2026 ກ່ຽວກັບແຜນການດໍາເນີນງານ ການແຍກກິດຈະການປະກັນຊີວິດ ແລະ ປະກັນໄພທົ່ວໄປ
- ອີງຕາມ ບົດບັນທຶກກອງປະຊຸມວິສາມັນຂອງຜູ້ຖືຮຸ້ນ ສະບັບເລກທີ 1/2026, ລົງວັນທີ 18 ພຶດສະພາ 2026.

ພວກຂ້າພະເຈົ້າ, ບໍລິສັດ ເອັສທີ-ເມືອງໄທ ປະກັນໄພ ຈໍາກັດ (“**ບໍລິສັດ**”), ໃບທະບຽນວິສາຫະກິດ ເລກທີ 2560/ຈທວ, ລົງວັນທີ 26 ພະຈິກ 2020, ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທີ່ເປັນເຈົ້າໜີ້ ແລະ ຜູ້ຖືສັນຍາປະກັນໄພຂອງບໍລິສັດ ຊາບດັ່ງນີ້:

ເພື່ອປະຕິບັດຕາມຂໍ້ກໍານົດຂອງກົດໝາຍວ່າດ້ວຍການປະກັນໄພ ແລະ ລະບຽບການກ່ຽວຂ້ອງ ແລະ ເພື່ອໃຫ້ມີການຈະເລີນເຕີບໂຕຢ່າງຕໍ່ເນື່ອງ ແລະ ທັງເປັນການຍົກລະດັບການບໍລິການລູກຄ້າຢູ່ໃນ ສປປ ລາວ, ບໍລິສັດ ຈະຖືກແຍກອອກເປັນ ບໍລິສັດ ປະກັນຊີວິດ ແລະ ບໍລິສັດ ປະກັນໄພທົ່ວໄປ. ຫຼັງຈາກນັ້ນ, ບໍລິສັດ ຈະປ່ຽນຊື່ໃໝ່ເປັນ ບໍລິສັດ ເອັສທີ-ເມືອງໄທ ປະກັນຊີວິດ ຈໍາກັດ. ບໍລິສັດ ປະກັນໄພທົ່ວໄປໃໝ່ ຈະຖືກສ້າງຕັ້ງຂຶ້ນພາຍໃຕ້ຊື່ ບໍລິສັດ ເອັສທີ-ເມືອງໄທ ປະກັນໄພທົ່ວໄປ ຈໍາກັດ.

ແຜນການແຍກບໍລິສັດປະກັນຊີວິດ ແລະ ບໍລິສັດປະກັນໄພທົ່ວໄປ, ລວມທັງ ການຫຼຸດທຶນ ແລະ ການໂອນສັນຍາປະກັນໄພທົ່ວໄປ ໄປຍັງ ບໍລິສັດ ເອັສທີ-ເມືອງໄທ ປະກັນໄພທົ່ວໄປ ຈໍາກັດ, ແມ່ນໄດ້ຮັບການອະນຸຍາດຈາກ ກົມຄຸ້ມຄອງວິສາຫະກິດການເງິນ, ກະຊວງການເງິນ ອີງຕາມໜັງສືແຈ້ງຕອບ ສະບັບເລກທີ 0455-01/ຄວກ, ລົງວັນທີ 04 ພຶດສະພາ 2026, ແລະ ໄດ້ຮັບການອະນຸມັດຈາກບັນດາຜູ້ຖືຮຸ້ນຂອງບໍລິສັດ ໃນກອງປະຊຸມວິສາມັນຂອງຜູ້ຖືຮຸ້ນ ສະບັບເລກທີ 1/2026, ລົງວັນທີ 18 ພຶດສະພາ 2026.

ພາຍຫຼັງການແຍກກິດຈະການປະກັນໄພຂອງບໍລິສັດ, ທຶນຈົດທະບຽນຂອງບໍລິສັດ ຈະຫຼຸດລົງຈາກ 60,727,240,000 ກີບ ມາເປັນ 30,363,620,000 ກີບ, ເຊິ່ງເປັນສ່ວນໜຶ່ງຂອງການປັບໂຄງສ້າງ ໂດຍມີການສ້າງຕັ້ງບໍລິສັດປະກັນໄພທົ່ວໄປ ແຍກຕ່າງຫາກ, ແລະ ບໍລິສັດ ຈະຖືກປ່ຽນຊື່ເປັນ ບໍລິສັດ ເອັສທີ-ເມືອງໄທ ປະກັນ

ຊີວິດ ຈໍາກັດ. ທຸກສັນຍາປະກັນໄພທົ່ວໄປ ຈະຖືກໂອນໄປຍັງ ບໍລິສັດ ປະກັນໄພທົ່ວໄປ ທີ່ສ້າງຕັ້ງຂຶ້ນໃໝ່ ພາຍໃຕ້ຊື່ ບໍລິສັດ ເອັສທີ-ເມືອງໄທ ປະກັນໄພທົ່ວໄປ ຈໍາກັດ. ບໍລິສັດໃໝ່ດັ່ງກ່າວ ຄາດວ່າຈະຖືກສ້າງຕັ້ງຂຶ້ນ ແລະ ເລີ່ມດໍາເນີນງານໃນລະຫວ່າງ ໄຕມາດທີສາມ ຂອງປີ 2026 (Q3 2026), ໂດຍຂຶ້ນກັບການໄດ້ຮັບການອະນຸຍາດ ແລະ ໃບອະນຸຍາດທີ່ກ່ຽວຂ້ອງທັງໝົດ.

ການແຍກບໍລິສັດ ແລະ ການຫຼຸດທຶນໃນຄັ້ງນີ້ ຈະບໍ່ມີຜົນກະທົບໃນທາງລົບໃດໆ ຕໍ່ສິດ ຫຼື ຜົນປະໂຫຍດຂອງເຈົ້າໜີ້ ຫຼື ຜູ້ຖືສັນຍາປະກັນໄພທັງໝົດ. ໜີ້ສິນ, ພັນທະ ແລະ ຂໍ້ຜູກພັນທັງໝົດທີ່ບໍ່ມີຂໍ້ຂັດແຍ່ງ ທີ່ບໍລິສັດຍັງເປັນໜີ້ ຈະຍັງຄົງສືບຕໍ່ໄດ້ຮັບການປະຕິບັດ ແລະ ຖືກຊໍາລະຄືນຢ່າງຖືກຕ້ອງເມື່ອຮອດກໍານົດ ໂດຍສອດຄ່ອງຕາມຂໍ້ກໍານົດ ແລະ ເງື່ອນໄຂທີ່ກ່ຽວຂ້ອງ. ນອກຈາກນັ້ນ, ລູກຄ້າປະກັນໄພທົ່ວໄປທັງໝົດ ຈະຍັງຄົງສືບຕໍ່ໄດ້ຮັບການຄຸ້ມຄອງ, ການບໍລິການ ແລະ ການສະໜັບສະໜູນດ້ານການຮຽກຮ້ອງສິນປະກັນໄພ ໂດຍບໍ່ມີການຢຸດສະງັກ ຈາກບໍລິສັດປະກັນໄພທົ່ວໄປແຫ່ງໃໝ່. ການປັບໂຄງສ້າງໃນຄັ້ງນີ້ ແມ່ນມີຈຸດປະສົງເພື່ອຍົກລະດັບຄຸນນະພາບຂອງການບໍລິການ ແລະ ປະສົບການຂອງລູກຄ້າ ສໍາລັບຜູ້ຖືສັນຍາປະກັນໄພທຸກທ່ານ.

ຖ້າຫາກທ່ານ ມີຂໍ້ຄັດຄ້ານໃດໆ ຕໍ່ກັບການຫຼຸດທຶນຈົດທະບຽນຂອງບໍລິສັດ ຫຼື ການໂອນສັນຍາປະກັນໄພທົ່ວໄປ ໃຫ້ແກ່ ບໍລິສັດ ປະກັນໄພທົ່ວໄປ ແຫ່ງໃໝ່, ກະລຸນາແຈ້ງໃຫ້ພວກເຮົາຊາບ ພາຍໃນກໍານົດເວລາ ສາມສິບ (30) ວັນ ນັບແຕ່ວັນຂອງແຈ້ງການສະບັບນີ້ ທີ່ເບີໂທລະສັບ +856 20 55216611 ຫຼື ຜ່ານທາງອີເມວ comsep@stmuangthai.com. ຖ້າຫາກບໍ່ມີຂໍ້ຄັດຄ້ານໃດໆ ພາຍໃນກໍານົດເວລາດັ່ງກ່າວ, ຈະຖືວ່າທ່ານໄດ້ໃຫ້ການຍິນຍອມເຫັນດີຕໍ່ການຫຼຸດທຶນ ແລະ ການໂອນສັນຍາປະກັນໄພທົ່ວໄປດັ່ງກ່າວ.

ດັ່ງນັ້ນ, ຈຶ່ງອອກແຈ້ງການສະບັບນີ້ ເພື່ອແຈ້ງເຖິງ ບັນດາເຈົ້າໜີ້, ຜູ້ຖືສັນຍາປະກັນໄພ, ພາກລັດ ແລະ ເອກະຊົນ, ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບຊາບ.

ຜູ້ອໍານວຍການໃຫຍ່

ການ ບໍລິສັດ ເອັສທີ-ເມືອງໄທ ປະກັນໄພ ຈໍາກັດ ST-MUANGTHAI INSURANCE CO.,LTD

ທ່ານ ໄຊຊະນະ ພູນສະຫວັນ